# ສົ່ງເສີມການປູກໝາກກ້ຽງນ້ຳບາກ
## ໃນແຂວງຫຼວງພະບາງ

*ໝາກກ້ຽງນ້ຳບາກ ແຂວງຫລວງພະບາງ ແມ່ນມີຄວາມຕ້ອງການສູງ ຍ້ອນວ່າມັນເປັນທີ່ນິຍົມຊົມຊອບຂອງຜູ້ບໍລິໂພກທັງຫລາຍເພາະວ່າມັນມີລົດຊາດສົ້ມຫວານປົນກັນ. ມີໂອກາດໃນການຜັນຂະຫຍາຍຜົນປະໂຫຍດເພື່ອຕອບສະໜອງຄວາມຕ້ອງການດັ່ງກ່າວ ໂດຍການແນະນຳວິທີການປູກໃຫ້ມີຄຸນນະພາບສູງຂຶ້ນ, ປັບປຸງການຄຸ້ມຄອງບົວລະບັດຮັກສາ, ສຸມໃສ່ພັດທະນາທາງດ້ານການຕະຫລາດ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຊາວສວນປູກໝາກກ້ຽງ.*



## ນິເວດວິທະຍາ ແລະ ການຄຸ້ມຄອງ

- ຕົ້ນໝາກກ້ຽງທີ່ໃຫຍ່ເຕັມທີ່ຈະເລີ່ມອອກດອກແຕ່ດອກມີນາ ເຖິງ ພຶດສະພາ ແລະ ໝາກສຸກເລີ່ມແຕ່ເດືອນ ກັນຍາ ເຖິງພະຈິກ.
- ເມື່ອເກັບກູ້ແລ້ວຄວນມີການຕັດແຕ່ງກິ່ງງ່າ.
- ເກສອນດອກໝາກກ້ຽງເປັນອາຫານຂອງເຜິ້ງ ແລະ ເຜິ້ງຊ່ວຍໃນການປະສົມລະອອງ.
- ໃນຊ່ວງລະດູຝົນຄວນມີການອະນາໄມວັດຊະພືດ 2-3 ຄັ້ງຕໍ່ປີ.

## ການຜະລິດ:

- ມີ 1,288 ຄອບຄົວ ທີ່ໄດ້ປູກໝາກກ້ຽງນ້ຳບາກ ຢູ່ພາຍໃນແຂວງ.
- ສວນໝາກກ້ຽງເມືອງນ້ຳບາກ ມີຢູ່ໃນ 26 ບ້ານ ໃນ 7 ເມືອງ ຂອງ ຫລວງພະບາງ.
- ຜົນຜະລິດໝາກກ້ຽງເມືອງນ້ຳບາກ ໄດ້ຢູ່ 11,500 ໂຕນ ຈາກເນື້ອທີ່ສວນ 350 ຮຕ.
- ປະຈຸບັນມີສວນກ້າເບ້ຍໝາກກ້ຽງ ທີ່ເປັນຂອງເອກະຊົນມີ 30 ແຫ່ງ ແລະ ເປັນຂອງລັດ 1 ແຫ່ງ ທີ່ຜະລິດເບ້ຍໝາກກ້ຽງພັນປັບປຸງ.
- ປະລິມານ ແລະ ຄຸນນະພາບໃນການຜະລິດໝາກກ້ຽງ ຍັງພົບກັບບັນຫາພະຍາດ, ແມງໄມ້ ແລະ ການບົວລະບັດຮັກສາ, ຄຸ້ມຄອງທີ່ຍັງປະຕິບັດບໍ່ໄດ້ດີເທົ່າທີ່ຄວນ.

## ການຕະຫຼາດ:

- ມີຕະຫລາດຫລາຍແຫ່ງທີ່ຂາຍໝາກກ້ຽງນ້ຳບາກ.
- ໝາກກ້ຽງ ແມ່ນມີຂາຍຢູ່ໃນຕະຫລາດ 35 ແຫ່ງພາຍໃນທົ່ວແຂວງ ແລະ ມີພໍ່ຄ້າຈາກທາງນອກມາເກັບຊື້ 20 ຄົນ.
- ຊາວກະສິກອນ ໄດ້ຂາຍຍົກເປັນຕົ້ນຕໍ ແລະ ຍັງມີຈຸດຂາຍອີກ 3 ຈຸດຢູ່ຕາມແຄມທາງຫລວງ, ການຂາຍຍົກໂດຍກົງຈາກສວນ ແລະ ຂາຍຢູ່ຕະຫລາດທ້ອງຖິ່ນ ເປັນຍຸດທະສາດການຂາຍທີ່ສຳຄັນ ທີ່ຊາວກະສິກອນໄດ້ປະຕິບັດຢູ່.
- ຍຸດທະສາດການຕະຫລາດ ແມ່ນຕ້ອງໄດ້ເພີ້ມການເອົາໃຈໃສ່ ກ່ຽວກັບ ການຜະລິດອິນຊີ, ຄຸນນະພາບ ແລະ ການຫຸ້ມຫໍ່.
- ລາຄາຂາຍຍົກໝາກກ້ຽງນ້ຳບາກຢູ່ສວນ ໃນໄລຍະ 5 ປີທີ່ຜ່ານມາ ແມ່ນ 1,500-2,000 ກີບ ຕໍ່ ໜຶ່ງກິໂລ, ສວນລາຄາຂາຍຍ່ອຍແມ່ນ 3,000-4,000 ກີບ ຕໍ່ ໜຶ່ງກິໂລ.



## ໂອກາດ:

- ປັບປຸງຄຸນນະພາບ ແລະ ການຜະລິດໝາກກ້ຽງ ໂດຍວິທີການປັບປຸງການຄຸ້ມຄອງທັງໝົດ, ການຕັດແຕ່ງກິ່ງງ່າຕົ້ນໝາກກ້ຽງໃນແຕ່ລະປີ.
- ຍົກລະດັບການນຳໃຊ້ນ້ຳຊົນລະປະທານ ແລະ ການໃສ່ຝຸ່ນຕ່າງໆ.
- ຕັດຕົ້ນທີ່ເປັນພະຍາດອອກ ປູກຕົ້ນທີ່ມີຄຸນນະພາບສູງໃສ່ແທນ.
- ປູກໝາກກ້ຽງແນວພັນອື່ນໃສ່ນຳຕື່ມ.


Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

NAFRI

TABI – The Agro-Biodiversity Initiative (TABI)